ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0498 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 12. 3. 2024.

ດ່ວນທີ່ສຸດ

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;
- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນຊົນລະປະທານຊັ້ນສູງທ່າງ່ອນ ທີ່ຂຶ້ນກັບ ກະຊວງກະສິກຳ ແລະ ປ່າໄມ້;
- ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ສະໝັກທຶນການສຶກສາລະດັບປະລິນຍາໂທ ແລະ ປະລິນຍາເອກ ສຳລັບປີ **2024** ພາຍໃຕ້ທຶນຂອງ ອົງການຮ່ວມມືສາກົນເກົາຫຼີ **(KOICA Scholarship Program 2024)**, ທີ່ ສ. ເກົາຫຼີ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ໜັງສືສະເໜີ ຈາກອົງການຮ່ວມມືສາກົນ ສ. ເກົາຫຼີ (KOICA ) ສະບັບເລກທີ KOICA/FP/24-004, ລົງວັນທີ 27 ກຸມພາ 2024;
- ອີງຕາມ ແຈ້ງການຂອງ ຫ້ອງການ, ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 688/ກຜທ.ກຮມ-ອປອ.03, ລົງວັນທີ 05 ມີນາ 2024;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງ ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ກ່ຽວກັບທຶນການສຶກສາລະດັບປະລິນຍາໂທ ແລະ ປະລິນຍາເອກ ສຳລັບ ປີ 2024 ພາຍໃຕ້ທຶນຂອງອົງການຮ່ວມມືສາກົນເກົາຫຼີ (KOICA Scholarship Program 2024), ທີ່ ສ.ເກົາຫຼີ, ເຊິ່ງມີຈຳນວນ 10 ຫົວຂໍ້ ທີ່ຜູ້ສົນໃຈສາມາດເລືອກສະໝັກໄດ້ປະກອບມີ: ຫົວຂໍ້ທີ່ກ່ຽວຂ້ອງກັບຂະແໜງກະສິກຳ ແລະ ປ່າໄມ້ ແລະ ຫົວຂໍ້ທີ່ກ່ຽວຂ້ອງກັບວິຊາສະເພາະຂອງຕົນ, ດັ່ງມີລາຍລະອຽດລຸ່ມນີ້:

| ລ/ດ | ຫົວຂໍ້ | ມະຫາວິທະຍາໄລ |
|---|---|---|
| 1 | Master's Degree Program in Global Education Leadership | Korea National University of Education |
| 2 | Master's Degree Program in Tax and Fiscal Policy | Korea University |
| 3 | Master's Degree Program in Public Management and Administrative Reform | Seoul National University |
| 4 | Master's Degree Program in Gender Equality | Ewha Womans University |
| 5 | Master's Degree Program in Smart-City Management and Technology | Hanyang University |



ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ/ແຟັກ: 021 412347, 415368, 452455, E-mail: doapmaf@gmail.com

| | | |
|---|---|---|
| 6 | Doctoral Program in Global Education Leadership | Korea National University of Education |
| 7 | Doctoral Program in Tax and Fiscal Policy | Korea University |
| 8 | Doctoral Program in Public Management and Administrative Reform | Seoul National University |
| 9 | Doctoral Program in Gender Equality | Ewha Womans University |
| 10 | Doctoral Program in Smart-City Management and Technology | Hanyang University |

<u>ເງື່ອນໄຂ ແລະ ວິທີການສະໝັກ:</u>

- ຜູ້ທີ່ຈະສະໝັກຕ້ອງເປັນພະນັກງານ-ລັດຖະກອນສົມບູນ 02 ປີຂຶ້ນໄປ;
- ຜູ້ສະໝັກຕ້ອງມີຄວາມຮູ້ພາສາອັງກິດໃນລະດັບດີ ທັງພາກເວົ້າ, ຂຽນ, ຟັງ ແລະ ອ່ານ;
- ຜູ້ສະໝັກຕ້ອງມີສຸຂະພາບແຂງແຮງ;
- ສໍາລັບແບບຟອມສະໝັກ ແລະ ລາຍລະອຽດຕ່າງໆຂອງທຶນສາມາດດາວໂຫຼດໄດ້ທີ່ ເວັບໄຊ https://koica.go.kr/sites/ciat/index.do ຫຼື ຕາມ QR Code ດ້ານລຸ່ມ, ສ່ວນລາຍອະອຽດເພີ່ມເຕີມໃຫ້ພົວພັນພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ: (ທ.ສົມເພັດອຸດອນ ດວງມາລາ) ໂທ: 021 415368, 020 52879569.

ພາຍຫຼັງທີ່ຄັດເລືອກເອົາພະນັກງານຜູ້ທີ່ມີເງື່ອນໄຂເໝາະສົມເພື່ອເຂົ້າຮ່ວມສະໝັກທຶນດັ່ງກ່າວແລ້ວໃຫ້ສົ່ງລາຍຊື່ພ້ອມແບບຟອມສະໝັກຕາມເງື່ອນໄຂຂອງອົງການຮ່ວມມືສາກົນເກົາຫຼີ(KOICA) ເຖິງ ກົມຈັດຕັ້ງ ແລະ ພະນັກງານ ເພື່ອສັງລວມສົ່ງໃຫ້ ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ກ່ອນວັນທີ **21 ມີນາ 2024**.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມ

ທອງສະຫ້ວນ ພັນທະລາວົງ

ສໍາລັບແບບຟອມສະໝັກ



ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ/ແຟັກ: 021 412347, 415368, 452455, E-mail: doapmaf@gmail.com